**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

**ລັດຖະບານ** ເລກທີ ................../ລບ

ນະຄອນຫຼວງວຽງຈັນ, ວັນທີ ........................

# (ຮ່າງ) ດຳລັດ
# ວ່າດ້ວຍ ມາດຕະຖານພົ້ນທຸກ ແລະ ມາດຕະຖານພັດທະນາ

- ອີງຕາມ ກົດໝາຍ ວ່າດ້ວຍລັດຖະບານ ແຫ່ງ ສປປ ລາວ ສະບັບເລກທີ 03/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ໜັງສືສະເໜີ ຂອງກະຊວງກະສິກຳ ແລະ ສິ່ງແວດລ້ອມ ສະບັບເລກທີ........../...., ລົງວັນທີ ..........

## ລັດຖະບານ ອອກດຳລັດ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1** (ປັບປຸງ) **ຈຸດປະສົງ**

ດຳລັດ ສະບັບນີ້ ກຳນົດມາດຕະຖານພົ້ນທຸກ ແລະ ມາດຕະຖານພັດທະນາ ເພື່ອເປັນພື້ນຖານໃຫ້ແກ່ການກຳນົດເປົ້າໝາຍແກ້ໄຂຄວາມທຸກຍາກ, ແນໃສ່ການສ້າງຄອບຄົວ, ບ້ານພັດທະນາ, ບ້ານໃຫຍ່ເປັນຕົວເມືອງໃນຊົນນະບົດ ແລະ ເມືອງເຂັ້ມແຂງຮອບດ້ານ ຕາມມະຕິກອງປະຊຸມໃຫຍ່ຂອງພັກ ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ທັງເປັນບ່ອນອີງ ໃຫ້ບັນດາຂະແໜງການຂັ້ນສູນກາງ ແລະ ຂັ້ນທ້ອງຖິ່ນ ນຳໃຊ້ເຂົ້າໃນການວາງແຜນພັດທະນາຂອງຂະແໜງການ ແລະ ທ້ອງຖິ່ນຕົນ ໃນແຕ່ລະໄລຍະ ໃຫ້ປະກົດຜົນເປັນຈິງ.

**ມາດຕາ 2 ມາດຕະຖານພົ້ນທຸກ ແລະ ມາດຕະຖານພັດທະນາ**

ມາດຕະຖານພົ້ນທຸກ ແມ່ນການກຳນົດເງື່ອນໄຂພື້ນຖານທາງດ້ານເສດຖະກິດ-ສັງຄົມ ເພື່ອວັດແທກ ຄອບຄົວ, ບ້ານ, ເມືອງພົ້ນທຸກ ໃຫ້ສອດຄ່ອງກັບສະພາບຄວາມເປັນຈິງ ຂອງປະເທດ ໃນແຕ່ລະໄລຍະ.

ມາດຕະຖານພັດທະນາ ແມ່ນການກຳນົດບັນດາເງື່ອນໄຂທີ່ມີລັກສະນະຮອບດ້ານ ເພື່ອວັດແທກຜົນສຳເລັດຂອງການສ້າງຄອບຄົວ, ບ້ານພັດທະນາ, ບ້ານໃຫຍ່ເປັນຕົວເມືອງໃນຊົນນະບົດ ແລະ ເມືອງເຂັ້ມ ແຂງຮອບດ້ານ ໃຫ້ສອດຄ່ອງກັບສະພາບຄວາມເປັນຈິງ ຂອງປະເທດ ໃນແຕ່ລະໄລຍະ.

**ມາດຕາ 3** (ປັບປຸງ) **ການອະທິບາຍຄຳສັບ**

ຄຳສັບ ທີ່ນຳໃຊ້ໃນດຳລັດສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. (ປັບປຸງ) **ພົ້ນທຸກ** ໝາຍເຖິງການບັນລຸປັດໄຈພື້ນຖານ ໃນການດຳລົງຊີວິດປະຈຳວັນ ຄື: ມີອາຫານການກິນທີ່ສາມາດຕອບສະໜອງພະລັງງານ ສອງພັນໜຶ່ງຮ້ອຍ ກິໂລກາລໍລີ ຕໍ່ຄົນຕໍ່ມື້ ຂຶ້ນໄປ, ມີເຄື່ອງນຸ່ງຫົ່ມ, ມີທີ່ຢູ່ອາໄສຖາວອນ, ມີອາຊີບ ແລະ ວຽກເຮັດງານທຳທີ່ໝັ້ນຄົງ, ສາມາດໃຊ້ຈ່າຍປິ່ນປົວເວລາເຈັບເປັນ ແລະ ໃນການສຶກສາ ຂັ້ນພື້ນຖານ, ສາມາດເຂົ້າເຖິງຕາໜ່າງການບໍລິການສາທາລະນະ ຂັ້ນພື້ນຖານ;
2. **ພັດທະນາ** ໝາຍເຖິງໝາກຜົນ ຂອງຂະບວນວິວັດແຫ່ງການສ້າງສາ ທີ່ບັນລຸເງື່ອນໄຂ, ມາດຕະຖານໃນການພັດທະນາຄື: ລະບົບການເມືອງມີຄວາມໜັກແໜ້ນ ເຂັ້ມແຂງ; ສັງຄົມມີຄວາມເປັນລະບຽບຮຽບຮ້ອຍ ແລະ ມີຄວາມສະຫງົບ ຢ່າງໜັກແໜ້ນ; ປະຊາຊົນມີຄວາມສາມັກຄີປອງດອງ, ມີຄວາມຕື່ນຕົວທາງດ້ານການເມືອງ, ມີສະຕິເຄົາລົບ ແລະ ປະຕິບັດລະບຽບກົດໝາຍ; ປະຊາຊົນໄດ້ເຂົ້າເຖິງການບໍລິການສາທາລະນະ ຂັ້ນພື້ນຖານ ແລະ ພົ້ນທຸກ; ພື້ນຖານດ້ານເສດຖະກິດ-ສັງຄົມ ມີການຂະຫຍາຍຕົວຢ່າງຕໍ່ເນື່ອງ ແລະ ຍືນຍົງ; ຊັບພະຍາ ກອນທຳມະຊາດ ແລະ ສິ່ງແວດລ້ອມ ໄດ້ຮັບການຄຸ້ມຄອງ, ປົກປັກຮັກສາ ແລະ ນຳໃຊ້ ຕາມທິດສີຂຽວ ແລະ ຍືນຍົງ;

3. **ບໍລິການສາທາລະນະ ຂັ້ນພື້ນຖານ** ໝາຍເຖິງການບໍລິການດ້ານສາທາລະນະປະໂຫຍດ ທີ່ອົງການລັດ, ພາກສ່ວນທຸລະກິດ ແລະ ອົງການຈັດຕັ້ງສັງຄົມ ສະໜອງໃຫ້ແກ່ປະຊາຊົນ ເປັນຕົ້ນ ດ້ານສາທາລະນະສຸກ, ການສຶກສາ, ການຄົມມະນາຄົມ, ການຂົນສົ່ງ, ຂໍ້ມູນຂ່າວສານ, ພະລັງງານ ແລະ ນ້ຳສະອາດ, ພື້ນຖານວັດຖຸເຕັກນິກ, ການເງິນ ແລະ ການຊື້ຂາຍ, ຄວາມສະຫງົບປອດໄພ ແລະ ດ້ານອື່ນໆ ທີ່ເປັນຂໍ້ສະດວກພື້ນຖານ ເອື້ອອຳນວຍໃຫ້ແກ່ການດຳລົງຊີວິດ ແລະ ທຳມາຫາກິນ;
4. (ເພີ່ມໃໝ່) **ການປະເມີນສະພາບພົ້ນທຸກ ແລະ ພັດທະນາ** ໝາຍເຖິງການເກັບກຳຂໍ້ມູນ ເພື່ອວັດແທກ ແລະ ຕີລາຄາການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ຂອງຂະແໜງການ ແລະ ທ້ອງຖິ່ນ ໃນແຕ່ລະໄລຍະ ຕາມມາດຕະຖານພົ້ນທຸກ ແລະ ມາດຕະຖານພັດທະນາ ທີ່ກຳນົດໄວ້;
5. **ຄອບຄົວ** ໝາຍເຖິງຈຸລັງໜຶ່ງຂອງສັງຄົມ ຊຶ່ງມີ ຜົວ, ເມຍ, ລູກ ຫຼື ສະມາຊິກອື່ນໃນຄອບຄົວ ທີ່ມີສາຍພົວພັນຊຶ່ງກັນ ແລະ ກັນ ແລະ ດຳລົງຊີວິດຮ່ວມກັນ ໂດຍມີສຳມະໂນຄົວຢັ້ງຢືນຢ່າງຖືກຕ້ອງ;
6. **ຊົນນະບົດ** ໝາຍເຖິງ ພື້ນທີ່ ຢູ່ນອກນະຄອນ, ເທດສະບານແຂວງ, ເທດສະບານເມືອງ ຊຶ່ງແມ່ນບ່ອນດຳລົງຊີວິດຂອງພົນລະເມືອງ ທີ່ປະກອບອາຊີບກະສິກຳເປັນຕົ້ນຕໍ ຢູ່ພາຍໃຕ້ການປົກຄອງ ຂອງອົງການປົກຄອງບ້ານ.

## ໝວດທີ 2
## ການກຳນົດມາດຕະຖານພົ້ນທຸກ

**ມາດຕາ 4** (ປັບປຸງ) **ມາດຕະຖານຄອບຄົວພົ້ນທຸກ**

ຄອບຄົວພົ້ນທຸກ ແມ່ນຄອບຄົວທີ່ຄົບຖ້ວນ ຕາມມາດຕະຖານ ດັ່ງນີ້:

1. ມີທີ່ຢູ່ອາໄສໝັ້ນໜາ ປອດໄພ;
2. ມີເຄື່ອງໃຊ້ຕ່າງໆ ທີ່ຈຳເປັນສຳລັບການດຳລົງຊີວິດ;
3. ມີແຮງງານ ແລະ ມີອາຊີບ ຫຼື ແຫຼ່ງລາຍຮັບໝັ້ນຄົງ;
4. ມີສະມາຊິກໃນຄອບຄົວ ໃນເກນອາຍຸໄດ້ຮັບການສຶກສາ ໃນລະດັບມັດທະຍົມຕອນຕົ້ນ ກວມ 85% (ແປດສິບຫ້າສ່ວນຮ້ອຍ) ຂຶ້ນໄປ;
5. ຊົມໃຊ້ນ້ຳສະອາດ ແລະ ພະລັງງານໝັ້ນຄົງ;
6. ເຂົ້າເຖິງການບໍລິການສາທາລະນະ ຂັ້ນພື້ນຖານ.

**ມາດຕາ 5** (ປັບປຸງ) **ມາດຕະຖານບ້ານພົ້ນທຸກ**

ບ້ານພົ້ນທຸກ ແມ່ນບ້ານທີ່ຄົບຖ້ວນ ຕາມມາດຕະຖານ ດັ່ງນີ້:

1. ອັດຕາການເຂົ້າຮຽນສຸດທິ ຊັ້ນປະຖົມ ຂອງເດັກໃນເກນອາຍຸ ຢູ່ພາຍໃນບ້ານ ກວມ 95% (ເກົ້າສິບຫ້າສ່ວນຮ້ອຍ) ແລະ ອັດຕາການເຂົ້າຮຽນລວມ ຊັ້ນມັດທະຍົມຕອນຕົ້ນ ຂອງເດັກໃນເກນອາຍຸ ຢູ່ພາຍໃນບ້ານ ກວມ 85% (ແປດສິບຫ້າສ່ວນຮ້ອຍ) ຂຶ້ນໄປ;
2. ມີ ຫຼື ເຂົ້າເຖິງ ສຸກສາລາ ຫຼື ການບໍລິການສຸຂະພາບ ຂັ້ນພື້ນຖານທີ່ມີຄຸນນະພາບ;
3. ມີນ້ຳສະອາດ;
4. ມີເສັ້ນທາງຄົມມະນາຄົມ ທີ່ສາມາດທຽວໄດ້ຕະຫຼອດປີ;
5. ເຂົ້າເຖິງການບໍລິການດ້ານໂທລະຄົມມະນາຄົມ ແລະ ການຂົນສົ່ງ;
6. ມີ ຫຼື ເຂົ້າເຖິງ ການຊື້-ຂາຍ ແລະ ແລກປ່ຽນສິນຄ້າ ຫຼື ຕະຫຼາດ;
7. ມີຕາຂ່າຍໄຟຟ້າໃນລະບົບ;
8. ມີຄອບຄົວພົ້ນທຸກ ກວມ 70% (ເຈັດສິບສ່ວນຮ້ອຍ) ຂຶ້ນໄປ ຂອງຈຳນວນຄອບຄົວທັງໝົດພາຍໃນບ້ານ.

**ມາດຕາ 6** (ປັບປຸງ) **ມາດຕະຖານເມືອງພົ້ນທຸກ**

ເມືອງພົ້ນທຸກ ແມ່ນເມືອງທີ່ຄົບຖ້ວນ ຕາມມາດຕະຖານ ດັ່ງນີ້:

1. ອັດຕາເຂົ້າຮຽນລວມ ຊັ້ນມັດທະຍົມຕອນຕົ້ນ ຂອງເດັກໃນເກນອາຍຸ ຢູ່ພາຍໃນເມືອງ ກວມ 85% (ແປດສິບຫ້າສ່ວນຮ້ອຍ) ແລະ ອັດຕາການເຂົ້າຮຽນລວມ ຊັ້ນມັດທະຍົມຕອນປາຍ ຂອງເດັກໃນເກນອາຍຸ ຢູ່ພາຍໃນເມືອງ ກວມ 60% (ຫົກສິບສ່ວນຮ້ອຍ) ຂຶ້ນໄປ;

2. ມີໂຮງໝໍເມືອງ ຫຼື ເຂົ້າເຖິງການບໍລິການຂອງໂຮງໝໍແຂວງ ຫຼື ສູນກາງ;
3. ເທດສະບານເມືອງ ໄດ້ຊົມໃຊ້ນໍ້າປະປາຊຸມຊົນ ຫຼື ລະບົບນໍ້າປະປາ;
4. ເທດສະບານເມືອງ ໄດ້ຈັດຕັ້ງປະຕິບັດຕາມແຜນຜັງ;
5. ມີເສັ້ນທາງເຂົ້າເຖິງທຽວໄດ້ຕະຫຼອດປີ ແລະ ເຊື່ອມຈອດກັບທຸກໆບ້ານ ພາຍໃນເມືອງ;
6. ມີລະບົບໂທລະຄົມມະນາຄົມ, ການຂົນສົ່ງ ແລະ ຂໍ້ມູນຂ່າວສານ;
7. ມີຕະຫຼາດຊື້-ຂາຍສິນຄ້າ ເປັນປົກກະຕິ;
8. ມີບ້ານເຂົ້າເຖິງການບໍລິການທາງດ້ານການເງິນ ກວມ 70% (ເຈັດສິບສ່ວນຮ້ອຍ) ຂຶ້ນໄປ;
9. ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ໄດ້ຮັບການຄຸ້ມຄອງ, ປົກປັກຮັກສາ ແລະ ນຳໃຊ້ຢ່າງມີປະສິດທິຜົນ;
10. ມີບ້ານພົ້ນທຸກ ຫຼາຍກວ່າ 70% (ເຈັດສິບສ່ວນຮ້ອຍ) ຂຶ້ນໄປ ຂອງຈຳນວນບ້ານທັງໝົດພາຍໃນເມືອງ.

## ໝວດທີ 3
## ການກຳນົດມາດຕະຖານພັດທະນາ

**ມາດຕາ 7** (ປັບປຸງ) **ມາດຕະຖານຄອບຄົວພັດທະນາ**

ຄອບຄົວພັດທະນາ ແມ່ນຄອບຄົວທີ່ຄົບຖ້ວນ ຕາມມາດຕະຖານ ດັ່ງນີ້:

1. ມີຄວາມສາມັກຄີ ແລະ ມີຄວາມຕື່ນຕົວ ເປັນເຈົ້າການໃນການປະກອບ ສ່ວນສ້າງສາພັດທະນາ;
2. ຕື່ນຕົວເປັນເຈົ້າການເຂົ້າຮ່ວມ ແລະ ປະກອບສ່ວນວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ;
3. ບັນລຸເງື່ອນໄຂດ້ານວັດທະນະທຳ-ສັງຄົມ;
4. ເປັນເຈົ້າການຄຸ້ມຄອງ, ປົກປັກຮັກສາ ແລະ ນຳໃຊ້ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຢ່າງມີປະສິດທິຜົນ ແລະ ຍືນຍົງ;
5. ເປັນຄອບຄົວພົ້ນທຸກ ແລະ ມີແຫຼ່ງລາຍຮັບໝັ້ນຄົງ.

**ມາດຕາ 8** (ປັບປຸງ) **ມາດຕະຖານບ້ານພັດທະນາ**

ບ້ານພັດທະນາ ແມ່ນບ້ານທີ່ຄົບຖ້ວນ ຕາມມາດຕະຖານ ດັ່ງນີ້:

1. ມີແຜນຜັງທີ່ດີ ແລະ ການຈັດຕັ້ງປະຕິບັດຕາມແຜນຜັງ;
2. ມີໂຄງລ່າງທາງດ້ານເສດຖະກິດ-ສັງຄົມ;
3. ມີເສດຖະກິດ ແລະ ການຈັດຕັ້ງການຜະລິດ;
4. ລະບົບການເມືອງ ຂອງບ້ານ ມີຄວາມໜັກແໜ້ນ ເຂັ້ມແຂງ;
5. ບັນລຸເງື່ອນໄຂດ້ານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ;
6. ບັນລຸເງື່ອນໄຂດ້ານວັດທະນະທຳ-ສັງຄົມ ແລະ ສິ່ງແວດລ້ອມ;
7. ມີຄອບຄົວພັດທະນາ ຢູ່ພາຍໃນບ້ານ ກວມ 85% (ແປດສິບຫ້າສ່ວນຮ້ອຍ) ຂຶ້ນໄປ;
8. ເປັນບ້ານພົ້ນທຸກ.

**ມາດຕາ 9** (ປັບປຸງ) **ມາດຕະຖານເມືອງເຂັ້ມແຂງຮອບດ້ານ**

ເມືອງເຂັ້ມແຂງຮອບດ້ານ ແມ່ນເມືອງທີ່ຄົບຖ້ວນ ຕາມມາດຕະຖານ ດັ່ງນີ້:

1. ລະບົບການເມືອງ ໜັກແໜ້ນ ເຂັ້ມແຂງ;
2. ມີຄວາມເຂັ້ມແຂງທາງດ້ານວຽກງານ ປ້ອງກັນຊາດ ແລະ ປ້ອງກັນຄວາມສະຫງົບ;
3. ມີແຜນກວມລວມ ໃນການພັດທະນາເມືອງຮອບດ້ານ ແລະ ຕ້ອງຈັດຕັ້ງປະຕິບັດຕາມແຜນການຢ່າງເຂັ້ມງວດ;
4. ບັນລຸເງື່ອນໄຂດ້ານໂຄງລ່າງເສດຖະກິດ-ສັງຄົມ;
5. ບັນລຸເງື່ອນໄຂດ້ານວັດທະນະທຳ-ສັງຄົມ ແລະ ສິ່ງແວດລ້ອມ;
6. ເສດຖະກິດມີການຂະຫຍາຍຕົວ ໜັກແໜ້ນ, ຕໍ່ເນື່ອງ, ມີຄວາມເຂັ້ມແຂງ ແລະ ສາມາດກຸ້ມຕົນເອງດ້ານງົບປະມານການເງິນ;

7. ມີບ້ານພັດທະນາ ຢູ່ພາຍໃນເມືອງ ກວມ 85% (ແປດສິບຫ້າສ່ວນຮ້ອຍ) ຂຶ້ນໄປ;
8. ເປັນເມືອງພົ້ນທຸກ.

**ມາດຕາ 10** (ປັບປຸງ) **ມາດຕະຖານບ້ານໃຫຍ່ເປັນຕົວເມືອງໃນຊົນນະບົດ**

ບ້ານໃຫຍ່ເປັນຕົວເມືອງໃນຊົນນະບົດ ແມ່ນບ້ານທີ່ຄົບຖ້ວນ ຕາມມາດຕະຖານ ດັ່ງນີ້:

1. ເປັນບ້ານພັດທະນາ ຢູ່ຊົນນະບົດ ທີ່ຕັ້ງຢູ່ຫ່າງຈາກໃຈກາງເມືອງ ຫຼື ເທດສະບານ ໃນລະດັບທີ່ແນ່ນອນ;
2. ເປັນໃຈກາງທາງດ້ານເສດຖະກິດ, ວັດທະນະທຳ-ສັງຄົມ, ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ໃຫ້ບັນດາບ້ານອ້ອມຂ້າງ;
3. ມີເສັ້ນທາງຄົມມະນາຄົມເຊື່ອມຈອດ ບັນດາບ້ານອ້ອມຂ້າງ ແລະ ເມືອງ ຫຼື ເທດສະບານ ຢ່າງສະດວກ;
4. ມີພື້ນຖານການຜະລິດ ແລະ ປຸງແຕ່ງເປັນສິນຄ້າ ທີ່ໝັ້ນຄົງ;
5. ມີຕະຫຼາດຖາວອນ ທີ່ມີການຊື້-ຂາຍ ເປັນປະຈຳ;
6. ມີ ຫຼື ເຂົ້າເຖິງການບໍລິການໄປສະນີ ຫຼື ໂທລະຄົມມະນາຄົມ;
7. ມີ ຫຼື ເຂົ້າເຖິງການບໍລິການດ້ານເຕັກນິກກະສິກຳ ແລະ ປ່າໄມ້;
8. ມີ ຫຼື ເຂົ້າເຖິງການບໍລິການ ຂອງທະນາຄານ ຫຼື ສະຖາບັນການເງິນໃດໜຶ່ງ;
9. ມີສຸກສາລາ;
10. ມີລະບົບນ້ຳປະປາຊຸມຊົນ;
11. ມີຕາຂ່າຍໄຟຟ້າໃນລະບົບ;
12. ມີໂຮງຮຽນມັດທະຍົມຕອນປາຍ;
13. ມີ ຫຼື ເຂົ້າເຖິງການບໍລິການທາງດ້ານການພັດທະນາສີມືແຮງງານ, ການຈັດຫາງານ ແລະ ລະບົບປົກປ້ອງສັງຄົມ ຂັ້ນພື້ນຖານ;
14. ມີການຄຸ້ມຄອງ, ປົກປັກຮັກສາ ແລະ ນຳໃຊ້ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຢ່າງມີປະສິດທິຜົນ ແລະ ຍືນຍົງ;
15. ມີພົນລະເມືອງ 1,000 ຄົນ ຂຶ້ນໄປ ສຳລັບບ້ານຢູ່ເຂດຊົນນະບົດພູດອຍ, ມີພົນລະເມືອງ 3,000 ຄົນ ຂຶ້ນໄປ ສຳລັບບ້ານຢູ່ເຂດຊົນນະບົດທົ່ງພຽງ.

## ໝວດທີ 4
## ການປະເມີນ, ການເກັບກຳຂໍ້ມູນ, ການລາຍງານ, ການຢັ້ງຢືນ ແລະ ການຮັບຮອງ

**ມາດຕາ 11** (ປັບປຸງ) **ການປະເມີນ, ການເກັບກຳຂໍ້ມູນ ແລະ ການລາຍງານ**

ການປະເມີນສະພາບພົ້ນທຸກ ແລະ ພັດທະນາ ແບບລະອຽດ ໃນທົ່ວປະເທດ ແມ່ນໃຫ້ດຳເນີນໃນທຸກ 5 ປີຕໍ່ຄັ້ງ ໂດຍດຳເນີນໃນໄລຍະທ້າຍສະໄໝ ຂອງການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງ ຄົມແຫ່ງຊາດ ໃນແຕ່ລະໄລຍະ ໂດຍແມ່ນ ກະຊວງກະສິກຳ ແລະ ສິ່ງແວດລ້ອມ ເປັນເຈົ້າການປະສານສົມທົບກັບຂະແໜງການ ແລະ ທ້ອງຖິ່ນ ຈັດຕັ້ງປະຕິບັດ. ເຊິ່ງການດຳເນີນໃນແຕ່ລະຄັ້ງນັ້ນ ຈະມີການແນະນຳ ແລະ ກຳນົດເວລາ ໃນການຈັດຕັ້ງປະຕິບັດຢ່າງລະອຽດຕື່ມ;

ການເກັບກຳຂໍ້ມູນ ການພົ້ນທຸກ ແລະ ພັດທະນາ ໃນແຕ່ລະປີ ແມ່ນໃຫ້ເກັບກຳຂໍ້ມູນ ຕາມການຈັດຕັ້ງປະຕິບັດບັນດາຄາດໝາຍສູ້ຊົນໃນປີ ແລະ ເກັບກຳຂໍ້ມູນໃນເຂດທີ່ມີໂຄງການພັດທະນາ ແລະ ໂຄງການແກ້ໄຂຄວາມທຸກຍາກຈັດຕັ້ງປະຕິບັດຢູ່ ໂດຍແມ່ນທ້ອງຖິ່ນ ເປັນເຈົ້າການຈັດຕັ້ງປະຕິບັດ ແລະ ໃຫ້ສຳເລັດ **ໃນເດືອນກັນຍາ ຂອງທຸກໆປີ;**

ການລາຍງານຂໍ້ມູນ ການພົ້ນທຸກ ແລະ ພັດທະນາ ຂອງທ້ອງຖິ່ນ ໃນແຕ່ລະປີ ແມ່ນໃຫ້ລາຍງານຫາ ກະຊວງກະສິກຳ ແລະ ສິ່ງແວດລ້ອມ ພາຍໃນເດືອນຕຸລາ ເພື່ອສັງລວມລາຍງານ ລັດຖະບານ ໃຫ້ທັນໃນເດືອນພະຈິກ ຂອງທຸກໆປີ;

**ມາດຕາ 12** (ປັບປຸງ) **ການຢັ້ງຢືນ ແລະ ການຮັບຮອງ**

ການຍັ້ງຢືນ ແລະ ການຮັບຮອງ ຄອບຄົວພົ້ນທຸກ ແລະ ຄອບຄົວພັດທະນາ ແມ່ນປະທານຄະນະກຳມະການປົກຄອງຕາແສງ ເປັນຜູ້ສະເໜີຜ່ານ ຫ້ອງການກະສິກຳ ແລະ ສິ່ງແວດລ້ອມເມືອງ ຕໍ່ທ່ານປະທານຄະນະກຳມະການປົກຄອງເມືອງ ເພື່ອພິຈາລະນາອອກໃບຍັ້ງຢືນ ແລະ ຮັບຮອງ;

ການຍັ້ງຢືນ ແລະ ການຮັບຮອງ ບ້ານພົ້ນທຸກ, ບ້ານພັດທະນາ ແລະ ບ້ານໃຫຍ່ເປັນຕົວເມືອງໃນຊົນນະບົດ ແມ່ນປະທານຄະນະກຳມະການປົກຄອງເມືອງ ເປັນຜູ້ສະເໜີຜ່ານ ພະແນກກະສິກຳ ແລະ ສິ່ງແວດລ້ອມ ນະຄອນຫຼວງ, ແຂວງ ຕໍ່ ປະທານຄະນະກຳມະການປົກຄອງ ນະຄອນຫຼວງ, ແຂວງ ເພື່ອພິຈາລະນາອອກໃບຍັ້ງຢືນ ແລະ ຮັບຮອງ;

ການຍັ້ງຢືນ ແລະ ການຮັບຮອງ ເມືອງພົ້ນທຸກ ແລະ ເມືອງເຂັ້ມແຂງຮອບດ້ານ ແມ່ນປະທານຄະນະກຳມະການປົກຄອງ ນະຄອນຫຼວງ, ແຂວງ ເປັນຜູ້ສະເໜີຜ່ານ ກະຊວງກະສິກຳ ແລະ ສິ່ງແວດລ້ອມ ຕໍ່ລັດຖະບານ ເພື່ອພິຈາລະນາອອກໃບຍັ້ງຢືນ ແລະ ຮັບຮອງ.

## ໝວດທີ 5
## ໜ້າທີ່ ແລະ ຄວາມຮັບຜິດຊອບ ຂອງຂະແໜງການຂັ້ນສູນກາງ ແລະ ທ້ອງຖິ່ນ

**ມາດຕາ 13 ໜ້າທີ່ ແລະ ຄວາມຮັບຜິດຊອບຂອງ ກະຊວງກະສິກຳ ແລະ ສິ່ງແວດລ້ອມ**

ກະຊວງກະສິກຳ ແລະ ສິ່ງແວດລ້ອມ ມີໜ້າທີ່ ແລະ ຄວາມຮັບຜິດຊອບຕົ້ນຕໍ ດັ່ງນີ້:

1. ຈັດຕັ້ງເຜີຍແຜ່ເຊື່ອມຊຶມ ດຳລັດສະບັບນີ້ ໃຫ້ບັນດາກະຊວງ, ອົງການຈັດຕັ້ງຂັ້ນສູນກາງ, ທ້ອງຖິ່ນ, ອົງການຈັດຕັ້ງສາກົນ, ອົງການຈັດຕັ້ງສັງຄົມ ຮັບຮູ້ ແລະ ເຂົ້າໃຈ ຢ່າງເລິກເຊິ່ງ ແລະ ທົ່ວເຖິງ;
2. ຄົ້ນຄວ້າອອກຄຳແນະນຳ, ຄູ່ມື, ແບບສອບຖາມ ແລະ ນິຕິກຳອື່ນທີ່ກ່ຽວຂ້ອງ ເພື່ອເປັນບ່ອນອີງໃຫ້ແກ່ບັນດາຂະແໜງການ ຂັ້ນສູນກາງ ແລະ ທ້ອງຖິ່ນນຳໄປຈັດຕັ້ງປະຕິບັດ ໃຫ້ມີຄວາມເປັນເອກະພາບກັນໃນທົ່ວປະເທດ;
3. ເປັນເຈົ້າການປະສານສົມທົບ ກັບບັນດາຂະແໜງການ ຂັ້ນສູນກາງ ແລະ ທ້ອງຖິ່ນ ເພື່ອສັງລວມແຜນການສ້າງຄອບຄົວ, ບ້ານພົ້ນທຸກ ແລະ ພັດທະນາ, ບ້ານໃຫຍ່ເປັນຕົວເມືອງໃນຊົນນະບົດ, ເມືອງພົ້ນທຸກ, ເມືອງເຂັ້ມແຂງຮອບດ້ານ ພ້ອມທັງຊຸກຍູ້ຕິດຕາມ ກວດກາ ການຈັດຕັ້ງປະຕິບັດ ແຕ່ລະໄລຍະ;
4. ເປັນເຈົ້າການປະສານສົມທົບ ກັບຂະແໜງການກ່ຽວຂ້ອງ ຈັດຕັ້ງການປະເມີນສະພາບພົ້ນທຸກ ແລະ ພັດທະນາ ແລະ ສະຫຼຸບ ສັງລວມລາຍງານ ຜົນການປະເມີນ ເພື່ອສະເໜີ ລັດຖະບານ ພິຈາລະນາຮັບຮອງ ແລະ ປະກາດໃຊ້ ແຕ່ລະໄລຍະ;
5. ສ້າງເປັນຖານຂໍ້ມູນ, ຈັດຕັ້ງເຜີຍແຜ່ໂຄສະນາ ຜົນການປະເມີນສະພາບພົ້ນທຸກ ແລະ ພັດທະນາໃຫ້ພາຍໃນ ແລະ ຕ່າງປະເທດ;
6. ເປັນເຈົ້າການພົວພັນຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານການແກ້ໄຂຄວາມທຸກຍາກ ບົນພື້ນຖານກົດໝາຍ ແລະ ລະບຽບການ.

**ມາດຕາ 14 ໜ້າທີ່ ແລະ ຄວາມຮັບຜິດຊອບຂອງ ກະຊວງ ແລະ ອົງການລັດທຽບເທົ່າກະຊວງ**

ກະຊວງ ແລະ ອົງການລັດທຽບເທົ່າກະຊວງ ມີໜ້າທີ່ ແລະ ຄວາມຮັບຜິດຊອບ ດັ່ງນີ້:

1. ຈັດຕັ້ງເຜີຍແຜ່ເຊື່ອມຊຶມ ດຳລັດສະບັບນີ້ ແລະ ນິຕິກຳ ຂອງຂະແໜງການຕົນ ໃຫ້ແກ່ພະນັກງານ-ລັດຖະກອນ ພາຍໃຕ້ຄວາມຮັບຜິດຊອບຂອງຕົນ ແຕ່ສູນກາງລົງຮອດທ້ອງຖິ່ນ ໃຫ້ຮັບຮູ້ ແລະ ເຂົ້າໃຈຢ່າງທົ່ວເຖິງ;
2. ຄົ້ນຄວ້າ, ກຳນົດມາດຕະຖານ, ເງື່ອນໄຂການພົ້ນທຸກ ແລະ ພັດທະນາ ພ້ອມທັງ ອອກຄຳແນະນຳ, ຝຶກອົບຮົມສ້າງຄວາມເຂັ້ມແຂງ ໃຫ້ພະນັກງານວິຊາການຂອງຕົນ ຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ ທີ່ກ່ຽວຂ້ອງກັບຂະແໜງການຕົນ;
3. ສ້າງແຜນການ, ໂຄງການ ແລະ ແຜນງົບປະມານ ໃນການສ້າງຄອບຄົວ, ບ້ານພົ້ນທຸກ ແລະ ພັດທະນາ, ບ້ານໃຫຍ່ເປັນຕົວເມືອງໃນຊົນນະບົດ, ເມືອງພົ້ນທຸກ ແລະ ເມືອງເຂັ້ມແຂງຮອບດ້ານ ຕາມມາດຕະຖານ ແລະ ເງື່ອນໄຂ ທີ່ກ່ຽວຂ້ອງກັບຂະແໜງການຕົນ ແລະ ຈັດຕັ້ງປະຕິບັດແຜນດັ່ງກ່າວ ໃນແຕ່ລະໄລຍະ;

4. ປະເມີນຄອບຄົວ, ບ້ານພົ້ນທຸກ ແລະ ພັດທະນາ, ບ້ານໃຫຍ່ເປັນຕົວເມືອງໃນຊົນນະບົດ, ເມືອງພົ້ນທຸກ ແລະ ເມືອງເຂັ້ມແຂງຮອບດ້ານ ຕາມມາດຕະຖານ ທີ່ກ່ຽວຂ້ອງກັບຂະແໜງການຕົນ ພ້ອມທັງຄົ້ນ ຄວ້າວິໄຈ ແລະ ຢັ້ງຢືນຮັບຮອງ ຜົນການປະເມີນ ແລະ ສະຫຼຸບ ລາຍງານໃຫ້ ກະຊວງກະສິກຳ ແລະ ສິ່ງແວດລ້ອມ ພ້ອມທັງລາຍງານ ລັດຖະບານ ເພື່ອຊາບ.

**ມາດຕາ 15 ໜ້າທີ່ ແລະ ຄວາມຮັບຜິດຊອບຂອງຂະແໜງກະສິກຳ ແລະ ສິ່ງແວດລ້ອມ ຂັ້ນທ້ອງຖິ່ນ**

ຂະແໜງກະສິກຳ ແລະ ສິ່ງແວດລ້ອມ ຂັ້ນທ້ອງຖິ່ນ ມີໜ້າທີ່ ແລະ ຄວາມຮັບຜິດຊອບ ດັ່ງນີ້:

1. ຈັດຕັ້ງ ເຜີຍແຜ່ ເຊື່ອມຊຶມ ດຳລັດສະບັບນີ້, ຄຳແນະນຳ, ຄູ່ມື ແລະ ແບບສອບຖາມ ແລະ ດຳເນີນການຝຶກອົບຮົມສ້າງຄວາມເຂັ້ມແຂງ ໃນການຈັດຕັ້ງປະຕິບັດໃຫ້ບັນດາຂະແໜງການ ຂັ້ນທ້ອງຖິ່ນ ໃຫ້ຮັບຮູ້ ແລະ ເຂົ້າໃຈ ຢ່າງທົ່ວເຖິງ;
2. ປະສານສົມທົບກັບ ບັນດາຂະແໜງການ ຂັ້ນທ້ອງຖິ່ນ ກຳນົດ ແລະ ຈັດຕັ້ງປະຕິບັດແຜນການສ້າງຄອບຄົວ, ບ້ານພົ້ນທຸກ ແລະ ພັດທະນາ, ບ້ານໃຫຍ່ເປັນຕົວເມືອງໃນຊົນນະບົດ, ເມືອງພົ້ນທຸກ ແລະ ເມືອງເຂັ້ມແຂງຮອບດ້ານ ພ້ອມທັງ ຊຸກຍູ້ ຕິດຕາມກວດກາ ການຈັດຕັ້ງປະຕິບັດຕົວຈິງ;
3. ເປັນເຈົ້າການປະສານສົມທົບຂະແໜງການຂັ້ນທ້ອງຖິ່ນ ດຳເນີນການປະເມີນຄອບຄົວ, ບ້ານພົ້ນທຸກ ແລະ ພັດທະນາ, ບ້ານໃຫຍ່ເປັນຕົວເມືອງໃນຊົນນະບົດ, ເມືອງພົ້ນທຸກ ແລະ ເມືອງເຂັ້ມແຂງຮອບດ້ານ ໃນແຕ່ລະປີ;
4. ຄົ້ນຄວ້າວິໄຈ ແລະ ສະຫຼຸບ ສັງລວມ ລາຍງານຜົນການປະເມີນ ໃຫ້ຄະນະກຳມະການປົກຄອງເມືອງ, ແຂວງ, ນະຄອນຫຼວງ ແລ້ວສັງລວມລາຍງານ ກະຊວງກະສິກຳ ແລະ ສິ່ງແວດລ້ອມ;
5. ສ້າງເປັນຖານຂໍ້ມູນ ຜົນການປະເມີນຄອບຄົວ, ບ້ານພົ້ນທຸກ ແລະ ພັດທະນາ, ບ້ານໃຫຍ່ເປັນຕົວເມືອງໃນຊົນນະບົດ, ເມືອງພົ້ນທຸກ ແລະ ເມືອງເຂັ້ມແຂງຮອບດ້ານ ໃນແຕ່ລະປີ ແລະ ເຜີຍແຜ່ໃຫ້ບັນດາຂະແໜງການ, ອົງການປົກຄອງ ແຕ່ລະຂັ້ນ, ອົງການຈັດຕັ້ງສັງຄົມ ແລະ ປະຊາຊົນ ຮັບຮູ້ຢ່າງທົ່ວເຖິງ.

**ມາດຕາ 16 ໜ້າທີ່ ແລະ ຄວາມຮັບຜິດຊອບຂອງ ຂະແໜງການກ່ຽວຂ້ອງ ຂັ້ນທ້ອງຖິ່ນ**

ຂະແໜງການກ່ຽວຂ້ອງ ຂັ້ນທ້ອງຖິ່ນ ມີໜ້າທີ່ ແລະ ຄວາມຮັບຜິດຊອບ ດັ່ງນີ້:

1. ຈັດຕັ້ງ ເຜີຍແຜ່ ເຊື່ອມຊຶມ ດຳລັດສະບັບນີ້, ຄຳແນະນຳ, ຄູ່ມື ການຈັດຕັ້ງປະຕິບັດ ແລະ ຄຳແນະນຳຂອງ ຂະແໜງການຕົນ ແລະ ຝຶກອົບຮົມໃຫ້ພະນັກງານ-ລັດຖະກອນ ໃນຂະແໜງການສາຍຕັ້ງຕົນຮັບຮູ້ ແລະ ເຂົ້າໃຈຢ່າງທົ່ວເຖິງ;
2. ສ້າງແຜນການ, ໂຄງການ ແລະ ແຜນງົບປະມານ ໃນການສ້າງຄອບຄົວ, ບ້ານພົ້ນທຸກ ແລະ ພັດທະນາ, ບ້ານໃຫຍ່ເປັນຕົວເມືອງໃນຊົນນະບົດ, ເມືອງພົ້ນທຸກ ແລະ ເມືອງເຂັ້ມແຂງຮອບດ້ານ ຕາມມາດຕະຖານ ທີ່ກ່ຽວຂ້ອງກັບຂະແໜງການຕົນ ພ້ອມທັງ ຊຸກຍູ້ ຕິດຕາມ ກວດກາ ການຈັດຕັ້ງປະຕິບັດຕົວຈິງ;
3. ປະສານສົມທົບກັບ ຂະແໜງກະສິກຳ ແລະ ສິ່ງແວດລ້ອມ ເພື່ອຈັດຕັ້ງການປະເມີນຄອບຄົວ, ບ້ານພົ້ນທຸກ ແລະ ພັດທະນາ, ບ້ານໃຫຍ່ເປັນຕົວເມືອງໃນຊົນນະບົດ, ເມືອງພົ້ນທຸກ ແລະ ເມືອງເຂັ້ມແຂງຮອບດ້ານ ຕາມມາດຕະຖານ ທີ່ກ່ຽວຂ້ອງກັບຂະແໜງການຕົນ;
4. ຄົ້ນຄວ້າ ວິໄຈ ແລະ ສະຫຼຸບ ສັງລວມລາຍງານຜົນການປະເມີນ ໃຫ້ຄະນະກຳມະການປົກຄອງເມືອງ, ແຂວງ ພິຈາລະນາ ຢັ້ງຢືນຮັບຮອງ ແລະ ສັງລວມລາຍງານໃຫ້ ພະແນກ, ຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ແລະ ຂະແໜງການສາຍຕັ້ງ ຂອງຕົນ ເປັນປົກກະຕິ.

## ໝວດທີ 6
## ບົດບັນຍັດສຸດທ້າຍ

**ມາດຕາ 17 ການປັບປຸງ ແລະ ການປ່ຽນແປງມາດຕະຖານພົ້ນທຸກ ແລະ ມາດຕະຖານພັດທະນາ**

ມາດຕະຖານພົ້ນທຸກ ແລະ ມາດຕະຖານພັດທະນາ ຈະມີການປັບປຸງ ແລະ ປ່ຽນແປງໄປຕາມການຂະຫຍາຍຕົວ ທາງດ້ານເສດຖະກິດ-ສັງຄົມ ໃນແຕ່ລະໄລຍະ;

ກະຊວງກະສິກຳ ແລະ ສິ່ງແວດລ້ອມ ຮ່ວມກັບພາກສ່ວນກ່ຽວຂ້ອງ ເປັນໃຈກາງໃນການປະສານສົມທົບກັບ ບັນດາກະຊວງ ແລະ ອົງການລັດທຽບເທົ່າກະຊວງ ຂັ້ນສູນກາງ ແລະ ທ້ອງຖິ່ນ ໃນການຄົ້ນຄວ້າປັບປຸງມາດຕະຖານດັ່ງກ່າວ ແລ້ວນຳສະເໜີ ລັດຖະບານ ພິຈາລະນາ.

**ມາດຕາ 18 ການຈັດຕັ້ງປະຕິບັດ**

ມອບໃຫ້ ກະຊວງກະສິກຳ ແລະ ສິ່ງແວດລ້ອມ ເປັນເຈົ້າການປະສານສົມທົບກັບ ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນ ຈັດຕັ້ງປະຕິບັດດຳລັດສະບັບນີ້ ໃຫ້ມີປະສິດທິຜົນ.

ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດ ດຳລັດສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 19 ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ດຳລັດສະບັບນີ້ ປ່ຽນແທນ ດຳລັດ ວ່າດ້ວຍມາດຕະຖານພື້ນທຸກ ແລະ ມາດຕະຖານພັດທະນາ ສະບັບເລກທີ 348/ລບ, ລົງວັນທີ 16 ພະຈິກ 2017.

**ຕາງໜ້າລັດຖະບານ ແຫ່ງ ສປປ ລາວ**

**ນາຍົກລັດຖະມົນຕີ**